ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

28-31 ຕຸລາ 2022

ປີທີ 11 ສະບັບທີ 887

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

## ປະທານສະພາແຫ່ງຊາດລາວ ເຂົ້າຮ່ວມກອງປະຊຸມ APPF ຄັ້ງທີ 30 ທີ່ຣາຊະອານາຈັກໄທ




(ສພຊ) ວັນທີ 26 ຕຸລາ 2022, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ນຳໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF) ຄັ້ງທີ 30 ທີ່ບາງກອກ, ຣາຊະອານາຈັກໄທ ພາຍໃຕ້ການເປັນປະທານເປີດກອງປະຊຸມຂອງ ພະນະທ່ານ ຊວນ ລີກໄພ ປະທານລັດຖະສະພາແຫ່ງ ຣາຊະອານາຈັກໄທ ໂດຍມີຄະນະຜູ້ແທນລັດຖະສະພາຈາກ 24 ປະເທດທີ່ເປັນສະມາຊິກຂອງອົງການ APPF, ບັນດາປະເທດສັງເກດການ ພ້ອມດ້ວຍຕາງໜ້າຈາກບັນດາອົງການລັດຖະສະພາພາກພື້ນ ແລະ ສາກົນເຂົ້າຮ່ວມຫລາຍກວ່າ 357 ຄົນ.

ກອງປະຊຸມ APPF ເປັນເວທີປຶກສາຫາລືຂອງບັນດາສະມາຊິກລັດຖະສະພາຍໃນພາກພື້ນອາຊີ-ປາຊີຟິກ ເຊິ່ງກອງປະຊຸມປະຈຳປີຄັ້ງນີ້ ຄະນະຜູ້ແທນຈະໄດ້ແລກປ່ຽນຄຳຄິດຄຳເຫັນພາຍໃຕ້ຄຳຂວັນຂອງກອງປະຊຸມທີ່ວ່າ: "ລັດຖະສະພາ ແລະ ການພັດທະນາແບບຍືນຍົງ ພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19 (Parliaments and the Post-COVID-19 Sustainable Development)" ເຊິ່ງຈະໄດ້ດຳເນີນເປັນເວລາ 3 ວັນ ໃນລະຫວ່າງວັນທີ 26-28 ຕຸລາ 2022.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຂຶ້ນກ່າວປາໄສຕໍ່ກອງປະຊຸມຄົບຄະນະໃນວາລະການເມືອງ ແລະ ຄວາມໝັ້ນຄົງ ພາຍໃຕ້ຫົວຂໍ້: "ສົ່ງເສີມການທູດລັດຖະສະພາ ເພື່ອຄວາມໝັ້ນຄົງໃນພາກພື້ນ". ນອກນັ້ນ, ຄະນະຜູ້ແທນຈາກສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມປຶກສາຫາລື ແລະ ມີຄຳເຫັນຕໍ່ກອງປະຊຸມຕ່າງໆ ເຊັ່ນ: ກອງປະຊຸມສະມາຊິກລັດຖະສະພາເພດຍິງກ່ຽວກັບການສ້າງຄວາມ

ອ່ານຕໍ່ໜ້າ 2

## ທາບທາມຄຳເຫັນໃສ່ຮ່າງກົດໝາຍ 12 ສະບັບ ຢູ່ແຂວງຫລວງພະບາງ



ໜ້າ 2

## ການນຳໃຊ້ຄູ່ມືການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ



(ສພຊ) ເພື່ອເຮັດໃຫ້ກຳມະການສັງກັດກຳມາທິການກົດໝາຍ ແລະ ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ສົ່ງເສີມທັກສະທາງດ້ານວິຊາການ ກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ສາມາດປະຕິບັດພາລະບົດບາດ ແລະ

ອ່ານຕໍ່ໜ້າ 2

## ສືບຕໍ່ຕິດຕາມກວດກາ ແລະ ເກັບກຳສະພາບການຈັດຕັ້ງປະຕິບັດນິຕິກຳ ຢູ່ແຂວງຄຳມ່ວນ

(ສພຊ) ໃນລະຫວ່າງວັນທີ 19-20 ຕຸລາຜ່ານມານີ້, ທີ່ສະພາປະຊາຊົນແຂວງຄຳມ່ວນ, ທ່ານ ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານການອອກໃບຕາດິນ ແລະ ການທົດລອງຂຸດຄົ້ນແຮ່ທາດ ຢູ່ແຂວງຄຳມ່ວນ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຂອງທ່ານ ບຸນມີ ພົມມະສອນ ປະທານສະພາປະຊາຊົນແຂວງ ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ພ້ອມດ້ວຍຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ ແລະ ບັນດາຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງຂອງແຂວງເຂົ້າຮ່ວມ.

ການເຄື່ອນໄຫວຕິດຕາມ

ອ່ານຕໍ່ໜ້າ 3

## ຍົກສູງບົດບາດການເຄື່ອນໄຫວຂອງ ສພຊ ແລະ ສພຂ ຢູ່ກອງບັນຊາການປ້ອງກັນສູນກາງ



ໜ້າ 3

## ຮອງເລຂາທິການສະພາແຫ່ງຊາດ ເຮັດວຽກຮ່ວມກັບຄະນະເລຂາທິການ ສພຂ ຊຽງຂວາງ



(ສພຊ) ໃນວັນທີ 17 ຕຸລາ 2022 ທ່ານ ສົງຄຳ ວົງພະຈັນຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຊຸກຍູ້ ແລະ ເກັບກຳຂໍ້ມູນການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາແຫ່ງຊາດ ຢູ່ສະພາປະຊາຊົນແຂວງ (ສພຂ) ໂດຍໄດ້ຮ່ວມເຮັດວຽກກັບທ່ານ ວຽງ

ອ່ານຕໍ່ໜ້າ 3

## ຕິດຕາມຊຸກຍູ້ ແລະ ເກັບກຳຂໍ້ມູນ ຢູ່ ສພຂ ອຸດົມໄຊ



(ສພຊ) ເພື່ອຈັດຕັ້ງປະຕິບັດຕາມແຜນການເຄື່ອນໄຫວຂອງຄະນະເລຂາທິການສະພາແຫ່ງຊາດ ແລະ ເພື່ອຮັບປະກັນໃນການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ໃຫ້ມີຄວາມຖືກຕ້ອງສອດຄ່ອງ ໃນການສະໜອງຂໍ້ມູນຕ່າງໆ ໃຫ້ແກ່ສະພາແຫ່ງຊາດ ກໍ

ອ່ານຕໍ່ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5



## ສືບຕໍ່ຕິດຕາມ...

ກອດກາຄັ້ງນີ້ ແມ່ນເພື່ອເກັບກຳສະພາບການຈັດຕັ້ງປະຕິບັດບັນດານິຕິກຳທີ່ພົວພັນກັບວຽກງານການຂຶ້ນທະບຽນ-ອອກໃບຕາດິນ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ວຽກງານການຂຸດຄົ້ນແຮ່ທາດທົດລອງ ຂອງພະແນກພະລັງງານ ແລະ ບໍ່ແຮ່ ທີ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຮັບຮອງເອົາ ປະກອບມີ: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ນິຕິກຳທີ່ກ່ຽວພັນກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງນີ້ເພື່ອນຳເອົາຂໍ້ມູນໄປວິເຄາະ, ວິໄຈໃຫ້ເຫັນສະພາບຕົວຈິງ ແລະ ນຳເອົາບັນຫາດັ່ງກ່າວນຳສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

(ເອື້ອ ມະໂນສິງ)

## ຮອງເລຂາທິການ...

ໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຮອງປະທານ ຄະນະກຳມະການ, ຄະນະເລຂາທິການ ສພຂ, ຄະນະກົມ, ຄະນະພະແນກ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງຄິດໃຫ້ແກ່ພະນັກງານ-ລັດຖະກອນດ້ວຍຫລາຍຮູບການ ເຊິ່ງໄດ້ປະສານສົມທົບກັບສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ອົງການປົກຄອງແຂວງ, ບັນດາຂະແໜງການທີ່ກ່ຽວຂ້ອງໃນການກະກຽມເອກະສານຕ່າງໆ ໂດຍສະເພາະແມ່ນກະກຽມເນື້ອໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງຂອງໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ການປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ, ການອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ ສພຂ ເຄື່ອນໄຫວວຽກງານ ແລະ ອື່ນໆ.

ໃນໂອກາດດັ່ງກ່າວ, ທ່ານ ສິງຄຳ ວົງພະຈັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຄະນະເລຂາທິການສະພາປະຊາຊົນແຂວງສາ



ເຂົ້າຮ່ວມ.

ກອງປະຊຸມ, ທ່ານ ຄຳຫລ້າ ແສງຄຳຢອງ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ລາຍງານຫຍໍ້ກ່ຽວກັບສະພາບພົ້ນເດັ່ນ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະດວກ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ຂຶ້ນກັບຄະນະເລຂາທິການ ແລະ ວຽກງານອື່ນໆທີ່ປິ່ນອ້ອມເປັນຕົ້ນແມ່ນຄະນະເລຂາທິການສະພາປະຊາຊົນແຂວງຊຽງຂວາງໄດ້ເອົາໃຈໃສ່ການຈັດຕັ້ງປະຕິບັດວຽກງານສຶກສາອົບຮົມການເມືອງ-ແນວສພຂ, ໄດ້ປັບປຸງກົງຈັກການຈັດຂອງ ສພຂ, ການສ້າງແຜນລົງເຄື່ອນໄຫວວຽກງານຕ່າງໆ, ອຳນວຍຄວາມສະດວກດ້ານງົບປະມານ, ພາຫະນະ ແລະ ອື່ນໆ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງ ສພຂ ໃຫ້ຖືກຕ້ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ; ພ້ອມນັ້ນ, ກອງປະຊຸມຍັງໄດ້ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໂດຍສະເພາະແມ່ນວຽກງານການກະກຽມເອກະສານໃຫ້ແກ່ກອງປະຊຸມ, ການກະກຽມເອກະສານມາດຈັດຕັ້ງປະຕິບັດໄດ້ ໃນໄລຍະຜ່ານມາ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງເອົາໃຈໃສ່ໃນການເປັນເສນາທິການທີ່ດີໃຫ້ການນຳຂອງ ສພຂ, ເອົາໃຈໃສ່ສ້າງຄວາມເຂັ້ມໃຫ້ພະນັກງານ, ຍົກສູງພາລະບົດບາດຂອງ ສພຂ ກໍຄືສະພາແຫ່ງຊາດໃຫ້ສູງຂຶ້ນກວ່າເກົ່າ ແລະ ທ່ານຍັງຮັບເອົາບັນດາຄຳຄິດຄຳເຫັນ ແລະ ຄຳສະເໜີຕ່າງໆ ເພື່ອນຳໄປສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ.

(ນາງ ສຸກສະຫວັນ ອິນທະແສງ)

## ຍົກສູງ...

(ສພຊ) ເພື່ອເປັນການສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມຍົກສູງບົດບາດການເຄື່ອນໄຫວຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໃຫ້ແກ່ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫລວດ ຢູ່ບັນດາວິທະຍາຄານ, ໂຮງຮຽນ ແລະ ກົມ ກະຊວງປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບ ໃຫ້ຮັບຮູ້ເຊື່ອມຊຶມຢ່າງທົ່ວເຖິງ. ໃນວັນທີ 26 ຕຸລາ 2022 ທ່ານ ພົຈວ. ປອ. ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ພ້ອມດ້ວຍທ່ານ ຄຳຜອງ ແສງສະຫວ່າງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ, ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະເຮັດວຽກຢູ່ສະໂມສອນກອງບັນຊາການປ້ອງກັນສູນກາງ ກະຊວງປ້ອງກັນຄວາມສະຫງົບ ໂດຍການຕ້ອນຮັບຂອງທ່ານ ພົຈວ. ສົມພົງ ຂຳວິລຸນ ຫົວໜ້າກອງບັນຊາການປ້ອງກັນສູນກາງ; ມີບັນດາຄະນະພັກ, ຄະນະນຳ, ພະນັກງານຫລັກແຫລ່ງ ແລະ ນາຍ ແລະ ພົນຕຳຫລວດ ພາຍໃນກອງບັນຊາການດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດນີ້, ທ່ານ ພັອ. ບຸນທົງ ສີດາວົງ ຮອງກອງບັນຊາການປ້ອງກັນສູນກາງ ໄດ້ລາຍງານຫຍໍ້ກ່ຽວກັບຜົນງານການເຄື່ອນໄຫວວຽກງານ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກອງບັນຊາການໃນໄລຍະຜ່ານມາ; ຈາກນັ້ນ, ທ່ານ ຄຳຜອງ ແສງສະຫວ່າງ ໄດ້ສະເໜີເອກະສານກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II; ພ້ອມນັ້ນ, ຍັງໄດ້ຮັບຟັງການສະເໜີກ່ຽວກັບສະພາບຄວາມເປັນມາ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ; ການປະຕິບັດນະໂຍບາຍຕໍ່ພະນັກງານ-ນັກຮົບໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະເໜີໂດຍທ່ານ ພັທ. ປະກອບໄຊ ສິດທິລາດວົງສາ ຫົວໜ້າພະແນກປ້ອງກັນຄວາມສະຫງົບ ກົມປ້ອງກັນຄວາມສະຫງົບ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ໂອກາດດຽວກັນນີ້, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຂອງທ່ານ ພົຈວ. ມາລາ ວິລະຈິດ ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານການເຄື່ອນໄຫວຂອງກອງບັນຊາການປ້ອງກັນຄວາມສູນກາງ ໃນໄລຍະຜ່ານມາ ເຊິ່ງສາມາດຮັກສາຄວາມປອດໄພຂອງບັນດາການນຳ ແລະ ຮັກສາໄດ້ຄວາມສະຫງົບຂອງສຳນັກງານ, ອົງການສຳຄັນຕ່າງໆຂອງປະເທດ. ພ້ອມນີ້, ທ່ານຍັງເນັ້ນໜັກໃຫ້ບັນດາທ່ານນາຍ ແລະ ພົນຕຳຫລວດທຸກສະຫາຍໃຫ້ເອົາໃຈໃສ່ຮັກສາມູນເຊື້ອຜົນງານທີ່ໄດ້ຮັບ, ປະຕິບັດໜ້າທີ່ທີ່ຕົນຮັບຜິດຊອບສູງ ແລະ ມີຜົນສຳເລັດອັນຈົບງາມ.

(ນາງ ປາກາລັກ ພົມມີໄຊ)



## ຕິດຕາມ...

ຄືຕາມທີ່ກົດໝາຍວ່າດ້ວຍສະພາປະຊາຊົນແຂວງ ໄດ້ກຳນົດໄວ້; ໃນວັນທີ 13 ຕຸລາ 2022 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ, ທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານວິຊາການ ຈຳນວນໜຶ່ງ ໄດ້ເຄື່ອນໄຫວຕິດຕາມຊຸກຍູ້ ແລະ ເກັບກຳຂໍ້ມູນການເຄື່ອນໄຫວວຽກງານຂອງສະພາປະຊົນແຂວງອຸດົມໄຊ ໂດຍການຕ້ອນຮັບຂອງທ່ານ ນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງອຸດົມໄຊ, ມີຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າຂະແໜງພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານເລຂາທິການສະພາປະຊາຊົນແຂວງ ໄດ້ຕາງໜ້າຄະນະປະຈຳ-ຄະນະເລຂາທິການສະພາປະຊາຊົນແຂວງ ກ່າວຮັບຕ້ອນ ແລະ ລາຍງານຫຍໍ້ສະພາບພົ້ນເດັ່ນຂອງການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ໃນໄລຍະຜ່ານມາ ເປັນຕົ້ນແມ່ນສະພາບລວມ, ລະບົບກົງຈັກການຈັດຕັ້ງ, ວຽກງານເລຂາການນຳ, ວຽກງານຂໍ້ມູນ-ຂ່າວສານ ແລະ ໄອທີ, ການເປັນເສນາທິການໃຫ້ແກ່ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ; ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ແລກປ່ຽນຄຳຄິດເຫັນເຊິ່ງກັນ ແລະ ກັນ ຢ່າງກົງໄປກົງມາ.

(ແສງພອນ ອິນນະລົງ)




# ເບີໂທສຸກເສີນ

**ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927

# ປະເມີນຜົນເນື້ອໃນການຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 3 ດີ ປະຈຳປີ 2022



(ສພຊ) ວັນທີ 21 ຕຸລາ 2022 ໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມ ປະເມີນເນື້ອໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ປະຈຳປີ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ພອນ ໄຊຍະບຸນ ຄະນະບໍລິຫານງານສະຫະພັນແມ່ຍິງແຂວງ, ຫົວໜ້າໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງຫົວພັນ; ເຂົ້າຮ່ວມມີຂອງສະຫາຍ ແທ້ງ ວິໄລພອນ ຄະນະໜ່ວຍພັກ ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ ສະພາປະຊາຊົນແຂວງ ພ້ອມດ້ວຍບັນດາສະມາຊິກແມ່ຍິງພາຍໃນໜ່ວຍເຂົ້າຮ່ວມທັງໝົດ15 ສະຫາຍ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການສະຫລຸບລາຍງານດ້ານດີຜົນງານ ແລະ ດ້ານອ່ອນຄົງຄ້າງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມເນື້ອຂໍ້ແຂ່ງຂັນ 3 ດີ ໃນໄລຍະ 1 ປີ ຜ່ານມາ ແລະ ທິດທາງແຜນການສ້າງໜ່ວຍແມ່ຍິງ 3 ດີ ປະຈຳປີ 2023. ພ້ອມນີ້, ກອງປະຊຸມຍັງໄດ້ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ໃສ່ບົດສະຫລຸບ ແລະ ທິດທາງ ເພື່ອໃຫ້ມີເນື້ອໃນຄົບຖ້ວນ, ສາມາດຈັດຕັ້ງປະຕິບັດໄດ້.

ຈາກນັ້ນ, ໄດ້ປະເມີນຜົນເນື້ອໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນແມ່ຍິງ 3 ດີ ເຊິ່ງພາຍໃນໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງ ມີສະມາຊິກແມ່ຍິງທັງໝົດ 19 ສະຫາຍ ປະເມີນຕົວຈິງ 18 ສະຫາຍ ແຕ່ລະສະຫາຍໄດ້ຜ່ານໃບສຳຫຼວດຕົນເອງ, ພ້ອມກັນຕີລາຄາແບ່ງປະເພດຕາມເງື່ອນໄຂມາດຖານຂໍ້ແຂ່ງຂັນແມ່ຍິງ 3 ດີ; ຜ່ານການຕີລາຄາແບ່ງປະເພດ ສາມາດຍາດໄດ້ບຸກຄົນ 3 ດີ. ພ້ອມດຽວກັນນັ້ນ, ສະມາຊິກພາຍໃນໜ່ວຍໄດ້ລົງປະຊາມະຕິຮັບຮອງເອົາໜ່ວຍແມ່ຍິງຂອງຕົນ ເປັນໜ່ວຍແມ່ຍິງ 3 ດີ ທັງສະເໜີຂັ້ນເທິງຄົ້ນຄວ້າອອກໃບຍັ້ງຢືນໃຫ້ໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງ ເປັນໜ່ວຍແມ່ຍິງ 3 ດີປີ 2022 .

ຕອນທ້າຍ, ສະຫາຍ ແທ້ງ ວິໄລພອນໄດ້ມີຄຳເຫັນໂອ້ລົມສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການເຄື່ອນໄຫວວຽກງານ ແມ່ຍິງໃນໄລຍະ 1 ປີຜ່ານມາທີ່ໄດ້ ພ້ອມກັນເຮັດສຳເລັດໜ້າທີ່ວຽກງານການເມືອງຂອງຕົນ ແລະ ຮຽກຮ້ອງໃຫ້ສະມາຊິກພາຍໃນໜ່ວຍແມ່ຍິງທັງໝົດ ຈົ່ງພ້ອມກັນເປັນເອກະພາບ; ຮັກສາມູນເຊື້ອຄວາມສາມັກຄີພາຍໃນ ແລະ ພາຍນອກ, ເປັນເຈົ້າການນຳກັນສ້າງຂະບວນການໃຫ້ດີກວ່າເກົ່າ, ສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີ; ເອົາໃຈໃສ່ສ້າງຄວາມກ້າຫານ ແລະ ບຸກບືນຕໍ່ໜ້າທີ່ວຽກງານວິຊາສະເພາະຂອງຕົນໃຫ້ນັບມື້ນັບດີຂຶ້ນ ແລະ ສ້າງໜ່ວຍແມ່ຍິງໃຫ້ກາຍເປັນໜ່ວຍແມ່ຍິງ 3 ດີຄັ້ງໄປ.

(ນັກຂ່າວ ສພຂ ຫົວພັນ)

leg]afdkog7njvows;8yf8k,d;fdk-5dp6hmujg,nv’c[j’



(ສພຊ) ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ວາລະແຫ່ງຊາດວ່າດ້ວຍຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍບັນຫາຢາເສບຕິດ.

ໃນລະຫວ່າງວັນທີ 20-21 ຕຸລາ 2022 ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງອຸດົມໄຊ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວ ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳປີ 2022 ແລະ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຢູ່ທີ່ເມືອງແບງ ແຂວງອຸດົມໄຊ.

ຈຸດປະສົງການເຄື່ອນໄຫວໃນຄັ້ງນີ້ ແມ່ນເພື່ອຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດມະຕິ ກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 139/ສພຂ.ອຊ, ລົງວັນທີ 31 ມັງກອນ 2022 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2022; ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ເພື່ອໃຫ້ເຫັນດ້ານດີ-ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ຊອກຫາວິທີແກ້ໄຂໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ; ເພື່ອເປັນຂໍ້ມູນ ແລະ ບ່ອນອີງ ໃນການຈັດຕັ້ງປະຕິບັດໜ້າທີ່ ຂອງບັນດາອົງການຈັດຕັ້ງຂັ້ນທ້ອງຖິ່ນ ຕໍ່ກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ທັງເປັນຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດ ເພື່ອກະກຽມເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

(ຫຼ້າ ອຸລາຫຼົງ)

# ຕິດຕາມກວດກາ ຢູ່ 4 ເມືອງ ແລະ 1 ນະຄອນ ແຂວງສະຫວັນນະເຂດ



(ສພຊ) ໃນວັນທີ 18-20 ຕຸລາ 2022 ທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ສະຫວັນນະເຂດ, ຮອງເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ວິຊາການທີ່ກ່ຽວຂ້ອງພາຍໃນສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວຕິດຕາມກວດກາ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ຢູ່ 4 ເມືອງ ແລະ 1 ນະຄອນ ຄື: ເມືອງອຸທຸມພອນ, ເມືອງໄຊບູລີ, ເມືອງອາດສະພັງທອງ, ເມືອງອາດສະພອນ ແລະ ນະຄອນໄກສອນ ພົມວິຫານ ໂດຍມີຄະນະນຳນະຄອນ, ເຈົ້າເມືອງ ພ້ອມດ້ວຍຄະນະ ແລະ ສສຂ ທີ່ປະຈຳຢູ່ເມືອງ, ນະຄອນ ແລະ ບັນດາຫົວໜ້າຫ້ອງການ ແລະ ພະນັກງານຫລັກແຫລ່ງຂອງເມືອງທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວໃນຄັ້ງນີ້ ກໍເພື່ອເປັນການຕິດຕາມຕິດຕາມກວດກາ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດຜ່ານມາມີຂໍ້ສະດວກ ແລະ ຂໍ້ຫຸ້ຍຍາກແນວໃດ ເພື່ອເປັນຖານຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ຈະເຂົ້າຮ່ວມໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຄາດວ່າຈະໄດ້ຈັດຂຶ້ນໃນເດືອນທັນວາ ແລະ ສະພາປະຊາຊົນແຂວງ ຊຸດທີ II ຕື່ມອີກ.

ໂອກາດດັ່ງກ່າວ, ຄະນະກໍໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຕ່ລະເມືອງ ແລະ ນະຄອນໂດຍສັງເຂບ; ຈາກນັ້ນ, ປະທານກອງປະຊຸມກໍໄດ້ເປີດໂອກາດໃຫ້ບັນດາທ່ານ ສສຊ, ສສຂ ແຕ່ລະຄະນະກຳມະການທີ່ຕິດຕາມໃນຄະນະ ໄດ້ແລກປ່ຽນ ແລະ ເຈາະຈີ້ມຂອງແຕ່ລະຂົງເຂດວຽກງານໂດຍກົງ ເປັນຕົ້ນແມ່ນຂົງເຂດວຽກງານເສດຖະກິດ ແຜນການ ແລະ ການເງິນ, ຂົງເຂດວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນໄລຍະຜ່ານມາເປັນແນວໃດ ເຊິ່ງບັນດາພາກສ່ວນທີ່ກ່ຽວຂ້ອງກໍໄດ້ຊີ້ແຈ້ງ ພ້ອມທັງຕອບຂໍ້ຊັກຖາມໃນແຕ່ລະບັນຫາຢ່າງກົງໄປກົງມາ ເຮັດການເກັບກຳຂໍ້ມູນ ແລະ ການຕິດຕາມກວດກາໃນຄັ້ງນີ້, ມີປະສິດທິຜົນ, ຮູ້ໄດ້ເຖິງສະພາບລວມ ດ້ານຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງກໍຄືຢູ່ບັນດາ 4 ເມືອງ ແລະ ນະຄອນດັ່ງກ່າວ.

ໃນຕອນທ້າຍຂອງກອງປະຊຸມ, ທ່ານ ນາງ ພູທອນ ແກ້ວພູວົງ ໄດ້ສະແດງຄວາມຂອບໃຈ ແລະ ຊົມເຊີຍ ຕໍ່ກັບຄະນະນຳ ກໍຄືບັນດາພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສະໜອງຂໍ້ມູນຮອບດ້ານໃນຄະນະທີມງານທີ່ມາເຄື່ອນໄຫວໃນຄັ້ງນີ້ ເຊິ່ງເປັນຂໍ້ມູນພື້ນຖານທີ່ສຳຄັນ ໃຫ້ແກ່ບັນດາທ່ານ ສສຊ ແລະ ສສຂ ທີ່ຈະກະກຽມເຂົ້າຮ່ວມໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II. ນອກຈາກນີ້, ທ່ານຍັງໄດ້ຮຽກຮ້ອງໃຫ້ທຸກພາກສ່ວນ ຈົ່ງພ້ອມພາກັນສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ໄປຈັດຕັ້ງຜັນຂະຫຍາຍໃຫ້ມີຄວາມສອດຄ່ອງ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນດີຂຶ້ນເລື້ອຍໆ ບັນລຸໄດ້ຕາມລະດັບຄາດໝາຍທີ່ກຳນົດໄວ້ອີກດ້ວຍ.

(ນາງ ຄອນສະຫວັນ ເມກສະຫວັນ)

# ຢ້ຽມຢາມຜູ້ມີສິດເລືອກຕັ້ງ ຢູ່ກຸ່ມພູຊວງ ແລະ ກຸ່ມເມືອງຂາຍ



(ສພຊ) ໂດຍປະຕິບັດຕາມຄຳສັ່ງແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ, ລົງວັນທີ 28 ກໍລະກົດ 2022 ແລະ ແຜນການເຄື່ອນໄຫວຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫລວງພະບາງ ຊຸດທີ II ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫລວງພະບາງ.

ໃນລະຫວ່າງວັນທີ 25-26 ຕຸລາ 2022 ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫລວງພະບາງ ນຳໂດຍທ່ານ ປອ. ສີນາວາ ສຸພານຸວົງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ເຄື່ອນໄຫວຢ້ຽມຢາມຜູ້ມີສິດເລືອກຕັ້ງ, ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຊຸດທີ II ຢູ່ບ້ານພົກນ້ອຍ ກຸ່ມພູຊວງ ແລະ ບ້ານປາກຊີ ກຸ່ມເມືອງຂາຍ ນະຄອນຫລວງພະບາງ ແຂວງຫລວງພະບາງ; ມີອຳນາດການປົກຄອງບ້ານອ້ອມຂ້າງຂອງສອງກຸ່ມເຂົ້າຮ່ວມມີ: ບ້ານຊຽງລ້ອມ, ບ້ານນູນສະຫວາດ, ບ້ານອູ້, ບ້ານເມືອງຂາຍ ແລະ ບ້ານຄົກມັນ ລວມ ມີ 7 ບ້ານ ຜູ້ເຂົ້າຮ່ວມທັງໝົດ 470 ຄົນ ຍິງ 98 ຄົນ.

ການພົບປະໂອ້ລົມຜູ້ມີສິດເລືອກຕັ້ງຄັ້ງນີ້ ແມ່ນນຳເອົາຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫລວງພະບາງ ຊຸດທີ II ທີ່ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ສຸມເຫື່ອແຮງ ແລະ ສະຕິປັນຍາຂອງຕົນ ເຂົ້າໃນການພິຈາລະນາຮັບຮອງເອົາບັນດາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງທ້ອງຖິ່ນ ຢູ່ໃນສອງກອງປະຊຸມດັ່ງກ່າວ ມາເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ປະຊາຊົນລາວບັນດາເຜົ່າ ຮັບຮູ້ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ຖືກຕ້ອງຕາມເປົ້າໝາຍ ແນໃສ່ເຮັດໃຫ້ບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງແຂວງທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຮັບຮອງເອົາໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງແຕ່ລະພາກສ່ວນ.

ໃນການເຄື່ອໄຫວ ແມ່ນໄດ້ໂອກາດສຳຄັນທີ່ໄດ້ຮັບຟັງຄຳຄິດຄຳເຫັນ ແລະ ເກັບກຳສະພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຢູ່ຂັ້ນທ້ອງຖິ່ນ ແລະ ບັນດາທ່ານ ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ບັນດາເນື້ອໃນທີ່ສຳຄັນຕ່າງໆ ແລະ ໃຫ້ໂອກາດຜູ້ເຂົ້າຮ່ວມຮັບຟັງໄດ້ສະເໜີຄຳຄິດຄຳເຫັນ ຫລືບັນຫາຕ່າງໆ ເຊິ່ງບັນດາທ່ານສະມາຊິກສະພາແຫ່ງຊາດ ກໍໄດ້ໃຫ້ຄຳຕອບກັບທີ່ໃນບາງຄຳຖາມ ແລະ ຈະນຳເອົາໄປຄົ້ນຄວ້າພິຈາລະນາກັບພາກສ່ວນກ່ຽວຂ້ອງຕື່ມອີກ.

(ຄຳດີ ພັນທະລີ)

# ກອງປະຊຸມໃຫຍ່ຄັ້ງທີ V ກຳມະບານຮາກຖານ ສະພາປະຊາຊົນແຂວງຫລວງນ້ຳທາ



(ສພຊ) ກອງປະຊຸມໃຫຍ່ຄັ້ງທີ V ຂອງກຳມະບານຮາກຖານສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນແລງວັນທີ 20 ຕຸລາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງສະຫາຍ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ປະທານກຳມະບານຮາກຖານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍສະຫາຍ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ສະຫາຍ ບຸນເລີດ ດ້ວງເງິນ ຮອງປະທານກຳມະບານແຂວງ; ມີເລຂາໜ່ວຍພັກຊີ້ນຳອົງການຈັດຕັ້ງມະຫາຊົນ, ບັນດາສະຫາຍຕາງໜ້າອົງການກຳມະບານແຂວງ, ໜ່ວຍກຳມະບານອ້ອມຂ້າງ ພ້ອມດ້ວຍສະມາຊິກກຳມະບານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ 42 ສະຫາຍ ຍິງ 22 ສະຫາຍ.

ກອງປະຊຸມໄດ້ຮັບຟັງຮ່າງບົດລາຍງານການເມືອງກຳມະບານຮາກຖານ ຕໍ່ກອງປະຊຸມໃຫຍ່ຄັ້ງທີ V ແລະ ທິດທາງແຜນການເຄື່ອນໄຫວວຽກງານ 5 ປີຕໍ່ໜ້າຂອງກຳມະບານຮາກຖານສະພາປະຊາຊົນແຂວງ ເຊິ່ງກຳມະບານຮາກຖານສະພາປະຊາຊົນແຂວງ ແມ່ນອົງການຈັດຕັ້ງໜຶ່ງຢູ່ພາຍໃຕ້ການຊີ້ນຳ-ນຳພາໂດຍກົງຂອງຄະນະໜ່ວຍພັກສະພາປະຊາຊົນແຂວງ ແລະ ຄະນະບໍລິຫານງານສະຫະພັນກຳມະບານແຂວງ ແລະ ມີສະມາຊິກກຳມະບານທັງໝົດ 45 ສະຫາຍ ຍິງ 23 ສະຫາຍ; ໃນໄລຍະ 5 ປີຜ່ານມາໄດ້ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງສູນກາງສະຫະພັນກຳມະບານລາວ ແລະ ສະຫະພັນກຳມະບານແຂວງ ກໍຄືມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງຕົນ, ຄະນະກຳມະບານຮາກຖານ, ສະມາຊິກກຳມະບານທຸກສະຫາຍ ໄດ້ຕັ້ງໜ້າເຄື່ອນໄຫວວຽກງານກຳມະບານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງມີຄວາມຮັບຜິດຊອບສູງ ແລະ ໄດ້ຮັບຜົນສຳເລັດຫລາຍດ້ານ, ພ້ອມທັງສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກກຳມະບານ ເປັນປົກກະຕິ ໃຫ້ມີແນວຄິດອຸ່ນອຽນທຸນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຕ່າງໆຂອງລັດແລະ ໄດ້ນຳເອົາມູນເຊື້ອອັນດີງາມຂອງຊາດ, ຂອງພັກ ມາເຜີຍແຜ່ໃຫ້ສະມາຊິກກຳມະບານຮັບຮູ້, ເຊື່ອມຊຶມເຂົ້າໃຈຢ່າງກວ້າງຂວາງ ແລະ ຈະສືບຕໍ່ຈັດຕັ້ງເຄື່ອນໄຫວວຽກງານກຳມະບານແຕ່ລະດ້ານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມະບານຮາກຖານ ໃຫ້ສຳເລັດຕາມຄາດໝາຍ ໃນນັ້ນ, ຜູ້ແທນກອງປະຊຸມໄດ້ປະກອບຄຳຄິດເຫັນຕໍ່ຮ່າງບົດລາຍງານການເມືອງກຳມະບານຮາກຖານ ຢ່າງມີຈຸດສຸມ ເພື່ອເຮັດໃຫ້ບົດລາຍງານ ມີເນື້ອໃນຖືກຕ້ອງສົມບູນກວ່າເກົ່າ, ສາມາດຈັດຕັ້ງປະຕິບັດໃນຕໍ່ໜ້າໃຫ້ມີຄຸນນະພາບສູງສຸດ; ພ້ອມດຽວກັນ, ຄະນະກຳມະບານຮາກຖານຊຸດເກົ່າໄດ້ຂຶ້ນອຳລາໜ້າທີ່ຢ່າງເປັນທາງການ ແລະ ສະມາຊິກສະຫະພັນກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ປ່ອນບັດເລືອກຕັ້ງເອົາຄະນະກຳມະບານຮາກຖານ ຊຸດໃໝ່ ຈຳນວນ 5 ສະຫາຍ, ເລືອກເອົາ 3 ສະຫາຍ ເພື່ອສືບຕໍ່ປະຕິບັດໜ້າທີ່ວຽກງານກຳມະບານໃຫ້ສຳເລັດ.

ໂອກາດນີ້, ສະຫາຍ ບຸນເລີດ ດ້ວງເງິນ ຮອງປະທານກຳມະບານແຂວງ ໄດ້ມີຄຳເຫັນໂອ້ລົມ ໂດຍສະຫາຍໃຫ້ຮູ້ເຖິງຄວາມໝາຍສຳຄັນຂອງວຽກງານກຳມະບານ ຢ່າງເລິກເຊິ່ງ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການນຳຂອງສະພາປະຊາຊົນແຂວງ ທີ່ໄດ້ຊີ້ນຳ-ນຳພາກຳມະບານຮາກຖານມາຕະຫລອດໄລຍະຜ່ານມາ, ຊົມເຊີຍຕໍ່ຜົນງານຂອງກຳມະບານຮາກຖານ ໃນໄລຍະຜ່ານມາເຫັນໄດ້ເຖິງຜົນສຳເລັດຫລາຍດ້ານ ແລະ ໃຫ້ສະມາຊິກກຳມະບານທຸກສະຫາຍຈົ່ງມີຄວາມຮັບຜິດຊອບສູງ, ມີຄວາມສາມັກຄີ, ເອົາໃຈໃສ່ຮ່ຳຮຽນເອົາປະສົບການໃໝ່ໆມາໝູນໃຊ້ພັດທະນາໃນວຽກງານວິຊາສະເພາະຂອງຕົນໃຫ້ມີຄຸນນະພາບ, ຮຽກຮ້ອງໃຫ້ຄະນະກຳມະບານຮາກຖານຊຸດໃໝ່ຈົ່ງເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດວຽກງານກຳມະບານ, ຊີ້ນຳ-ນຳພາກຳມະບານຮາກຖານຂອງຕົນໃຫ້ເຂັ້ມແຂງ ແລະ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

(ນັກຂ່າວ ສພຂ ຫລວງນ້ຳທາ)




# ປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຂົງເຂດຍຸຕິທຳ



(ສພຊ) ຕອນບ່າຍຂອງວັນທີ 24 ຕຸລາຜ່ານມາ, ຢູ່ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມດຳເນີນການຕິດຕາມກວດກາ ປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຂົງເຂດຍຸຕິທຳ ໂດຍການເປັນປະທານຂອງທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານ ສພຂ ສາລະວັນ; ເຂົ້າຮ່ວມມີຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສພຂ, ຄະນະເລຂາທິການ, ມີຕາງໜ້າຈາກອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ພ້ອມດ້ວຍພະນັກງານພາຍໃນ ສພຂ.

ການຈັດກອງປະຊຸມໃນຄັ້ງນີ້, ກໍເພື່ອກວດກາ ແລະ ປະເມີນຄືນການຈັດຕັ້ງຜັນຂະຫຍາຍ ກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ ຜົນການຈັດຕັ້ງປະຕິບັດໄລຍະຜ່ານມາ ຜ່ານການລົງເກັບກຳຂໍ້ມູນຕົວຈິງ ອາດເຫັນໄດ້ບາງໝວດ, ບາງມາດຕາ ແລະ ບາງເນື້ອໃນທີ່ອາດຈະຍັງບໍ່ທັນຖືກຕ້ອງ, ສອດຄ່ອງ ແລະ ບໍ່ທັນແທດເໝາະກັບສະພາບຄວາມເປັນຈິງເທົ່າທີ່ຄວນ ແລະ ເປັນຂໍ້ມູນທີ່ຈະສັງລວມເຂົ້າໃນການປັບປຸງກົດໝາຍ ຈະໄດ້ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທີ່ຈະເປີດຂຶ້ນໃນຕົ້ນເດືອນທັນວາທີ່ຈະມາເຖິງນີ້.

ໃນທີ່ປະຊຸມໄດ້ຮັບຟັງບົດລາຍງານການຈັດຕັ້ງການປະເມີນການຈັດຕັ້ງປະຕິບັດ ກົດໝາຍ 4 ສະບັບ ຈາກພາກສ່ວນທີ່ກ່ຽວຂ້ອງຕາມລຳດັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ຈາກນັ້ນ, ປະທານກອງປະຊຸມມີຄຳຖາມເຈາະຈີ້ມ ເພື່ອໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ບັນດາບົດລາຍງານດັ່ງກ່າວ.

ຫລັງຈາກນັ້ນ, ໄດ້ພ້ອມກັນແລກປ່ຽນ ແລະ ປຶກສາຫາລື ລົງເລິກເຂົ້າໃສ່ບາງບັນຫາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ ກົດໝາຍ 4 ສະບັບ ທີ່ຈະຕ້ອງໄດ້ມີການສະເໜີໃຫ້ປັບປຸງ ເພື່ອເຮັດໃຫ້ກົດໝາຍ ສາມາດເຜີຍແຜ່ນຳໃຊ້ໄດ້ຢ່າງມີປະສິດທິຜົນ, ມີຜົນສັກສິດ ແລະ ນຳໃຊ້ໄດ້ຢ່າງກວ້າງຂວາງ, ທົ່ວເຖິງ ປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ໃຫ້ດີຂຶ້ນເປັນກ້າວໆ.

ຕອນທ້າຍຂອງກອງປະຊຸມກໍຍັງໄດ້ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນຳຈາກປະທານກອງປະຊຸມ ໂດຍທ່ານໄດ້ເນັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງສືບຕໍ່ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມໃນຄັ້ງນີ້ ນຳໄປຄົ້ນຄວ້າສັງລວມຂໍ້ມູນຕາມຄຳຖາມເຈາະຈີ້ມໃຫ້ສຳເລັດທັນຕາມກຳນົດເວລາ ແລ້ວສົ່ງບົດລາຍງານໃຫ້ ສພຂ ໂດຍໄວ.

(ດີລຳພົນ ພົມມະຈັນ)

# ຜັນຂະຫຍາຍຜົນສຳເລັດກອງປະຊຸມ ສະໄໝສາມັນເທື່ອທີ 3 ຢູ່ເມືອງສາມັກຄີໄຊ



(ສພຊ) ໃນວັນທີ 17 ຕຸລາ 2022 ທີ່ສະໂມສອນຫ້ອງວ່າການປົກຄອງເມືອງສາມັກຄີໄຊ ແຂວງອັດຕະປື, ສະມາຊິກສະພາແຫ່ງຊາດ (ສສຊ) ເຂດເລືອກຕັ້ງທີ 17 ແຂວງອັດຕະປື ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງສາມັກຄີໄຊ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 17 ທັງເປັນປະທານ ສພຂ ອັດຕະປື ແລະ ທ່ານ ນາງ ພຸດມະໄລພອນ ແກ້ວວົງສາ ສສຂ ປະຈຳເຂດເລືອກຕັ້ງເມືອງສາມັກຄີໄຊ ພ້ອມດ້ວຍຄະນະ ເຂົ້າຮ່ວມມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ-ລັດຖະກອນ ຕະຫລອດຮອດອຳນາດການປົກຄອງບ້ານອ້ອມຂ້າງເມືອງເຂົ້າຮ່ວມ.

ກອງປະຊຸມໄດ້ຍົກໃຫ້ເຫັນບັນຫາສຳຄັນທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເປັນຕົ້ນແມ່ນເນື້ອໃນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ຮັບຮອງຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ຮັບຮອງການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ຮັບຮອງທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ; ຮັບຮອງການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19; ຮັບຮອງການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ໂດຍສະເພາະການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ ແລະ ຮັບຮອງເອົາການເລືອກຕັ້ງປະກອບອົງການກວດສອບແຫ່ງລັດ, ຮັບຮອງເອົາການສະເໜີແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ, ມະຕິກອງປະຊຸມຂອງສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສະພາປະຊາຊົນແຂວງ ໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຊຸດທີ II, ຮັບຮອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ທິດທາງ 6 ເດືອນທ້າຍປີ 2022, ຮັບຮອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ 2022 ແລະ ທິດທາງ 6 ເດືອນທ້າຍປີ 2022; ນອກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ມີຄຳສະເໜີ ແລະ ແລກປ່ຽນຄຳຄິດຄຳເຫັນ.

ທັງນີ້, ກໍເພື່ອເຮັດໃຫ້ພະນັກງານ-ລັດຖະກອນ ຕະຫລອດຮອດອົງການຈັດຕັ້ງຂັ້ນບ້ານຮັບຮູ້ ແລະ ເຂົ້າໃຈຕໍ່ການນຳພາຂອງພັກ, ລະບຽບກົດໝາຍຂອງລັດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືຂອງແຂວງ ແລະ ແນໃສ່ຮັບຮູ້ ແລະ ເຂົ້າໃຈຕໍ່ລະບົບກົງຈັກການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ແລະ ເນື້ອໃນວຽກງານສຳຄັນທີ່ໄດ້ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ພ້ອມກັນນຳເອົານິຕິກຳໃຕ້ກົດໝາຍ ກໍຄືມະຕິທີ່ໄດ້ຮັບຮອງໄປຈັດຕັ້ງເຜີຍແຜ່ ແລະ ຈັດຕັ້ງປະຕິບັດເຂົ້າໃນວຽກງານຂອງຕົນຢ່າງເປັນຮູບປະທຳ ແລະ ມີຜົນສຳເລັດ ເຮັດໃຫ້ພໍ່ແມ່ປະຊາຊົນຫລຸດພົ້ນອອກຈາກຄວາມທຸກຍາກເປັນກ້າວໆ.

(ວິນັດ)

108 ສາລະ

# ບຸນກະຖິນ ແລະ ບຸນພະທາດ

ຮີດຄອງປະເພນີລາວ ໄດ້ກຳເນີດມາແຕ່ສະໄໝບູຮານນະການ ແລະ ໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນສະໄໝເຈົ້າຟ້າງຸ່ມມະຫາລາດເປັນຕົ້ນມາ ປະຊາຊົນລາວທຸກເຜົ່າສາມັກຄີກັນ, ຮ່ວມແຮງຮ່ວມໃຈກັນສ້າງປະເທດ, ສ້າງພື້ນຖານວັດທະນະທຳ, ສິ່ງເສີມພູມປັນຍາຂອງປະຊາຊົນ ເມື່ອສາສະໜາຈະເລີນຮຸ່ງເຮືອງຂຶ້ນມາ ສາສະໜາສະຖານໄດ້ກາຍເປັນສູນກາງທາງດ້ານວັດທະນະທຳ, ເປັນໂຮງຮຽນ, ເປັນສູນບຳລຸງຈິດໃຈ, ເປັນຫໍພິພິດທະພັນ ທັງເປັນບ່ອນທຳບຸນສິນກິນທານ; ພະສົງ-ສາມະເນນ ແລະ ປະຊາຊົນ ໄດ້ປະຕິບັດພາລະບົດບາດ ແລະ ໜ້າທີ່ສຳຄັນ ໃນການອະນຸລັກ ແລະ ເຜີຍແຜ່ມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມໃນທ່າຕັ້ງໜ້າຈົນກາຍເປັນຊັບສົມບັດອັນລ້ຳຄ່າຂອງຊາດລາວເຮົາ ສືບມາເຖິງປັດຈຸບັນ.

ນັບແຕ່ມື້ແຮມ 1 ຄ່ຳ ເດືອນ 11 ຈົນຮອດວັນເພັງເດືອນ 12 ເປັນເວລາ 1 ເດືອນພໍດີ ເຊິ່ງໄລຍະນີ້ທາງວິໄນສົງ ຮຽກວ່າ «ຈີວະຣະກາລະສະໄໝ» ແປວ່າໄລຍະເວລາເຮັດຜ້າຈີວອນ ຫລື ຮຽກວ່າ "ຈີວະຣະທານະສະໄໝ" ແປວ່າ: ເວລາໃຫ້ຈີວອນ; ສ່ວນຄຳວ່າ «ກະຖິນ» ມີ 2 ຄວາມໝາຍຄື: ຄວາມໝາຍໃນທາງພາສາລາວແທ້ແປວ່າ ໄມ້ກັງ ຫລື ໄມ້ຄຶງ ໄທເອີ້ນວ່າ:ໄມ້ສະດຶງຄື : ໄມ້ເຮັດໃຫ້ເຄັ່ງ; ໃນສະໄໝກ່ອນໆພຸ້ນ ບໍ່ມີຜ້າຈີວອນຂາຍຢ່າງຫລວງຫລາຍຢູ່ຕະຫລອດຄືສະໄໝນີ້; ສະນັ້ນ, ພຣະພຸດທະເຈົ້າ ຈຶ່ງອະນຸຍາດໃຫ້ພຣະສົງຊອກຫາວັດຖຸໃຫ້ຖືກຕ້ອງຕາມວິໄນສົງ ແລ້ວມາຫຍິບຕໍ່ເຂົ້າກັນ; ເວລາຫຍິບຈຳເປັນຕ້ອງໃຊ້ໄມ້ແບບ ຫລື ໄມ້ຄຶງ; ການຫຍິບຜ້າຕາມໄມ້ຄຶງ ຈຶ່ງຮຽກວ່າ ຜ້າກະຖິນ; ອີກຄວາມໝາຍໃນຄຳນາມ ພາສາບາລີແປວ່າ ຜ້າທີ່ເຄີຍໃຫ້ພຣະສົງທີ່ຈຳວັດສາ ໝາຍຄວາມວ່າ ການເຮັດບຸນດ້ວຍການເອົາຜ້າໄປເຄີຍໃຫ້ຄູບາ ຫລື ພຣະສົງຢູ່ໃນວັດ; ບຸນນີ້ຖືເປັນອານິສົງຜົນແຫ່ງບຸນຂອງພຣະສົງທີ່ຈຳວັດສາຕະຫລອດ 3 ເດືອນເຕັມ ສົມຄວນຈະຕ້ອງໄດ້ຮັບກອງກະຖິນ (ຈຸລະກະຖິນ ຫລື ມະຫາກະຖິນ).

ບຸກຄົນໃດ ມີສັດທາເຮັດກອງກະຖິນສ່ວນຕົວກໍໄດ້ ຖ້າຈະເຮັດກອງກະຖິນໄປວັດ ເພິ່ນໄປປັກສະຫລາກໄວ້ ຫລື ບອກລ່ວງໜ້າກ່ອນກາງພັນສາ; ຈາກນັ້ນ, ທາງຄະນະຝ່າຍສົງປະຈຳວັດ ກໍຈະໄດ້ຮັບກອງກະຖິນ ກ່ອນຈະຮັບກອງກະຖິນ ພຣະສົງຈະຫາລືກັນວ່າ ພຣະສົງອົງໃດຄວນຈະໄດ້ຮັບກອງກະຖິນ.



ນອກຈາກບຸນກະຖິນແລ້ວ, ເພິ່ນຍັງເຮັດບຸນໄຫວ້ທາດ ການເຮັດບຸນໄຫວ້ທາດ ນັບວ່າເປັນບຸນປາງໃຫຍ່ຄຶກຄື້ນມ່ວນຊື່ນ ແລະສຳຄັນຕໍ່ປະເທດຊາດບ້ານເມືອງຫລາຍທີ່ສຸດ ແຕ່ກ່ອນປະຊາຊົນລາວເຮັດບຸນໄຫວ້ພຣະທາດຫລາຍແຫ່ງເຊັ່ນ ພະທາດຫລວງວຽງຈັນ, ພະທາດໝາກໂມ (ວັດວິຊຸນ) ຫລວງພະບາງ, ພະທາດອິງຮັງ ແລະ ພະທາດໂພ່ນ ແຂວງສະຫວັນນະເຂດ, ພະທາດສີໂຄດຕະບອງ ຢູ່ເມືອງເກົ່າ ແຂວງຄຳມ່ວນເປັນຕົ້ນ. ພະທາດຫລວງວຽງຈັນ ສ້າງຂຶ້ນໃນປີ 1566 ຫລັງຈາກພະເຈົ້າໄຊຍະເຊດຖາທິລາດ ຜັດທະນາເມືອງວຽງຈັນເປັນລາຊະທານີລ້ານຊ້າງໄດ້ 6 ປີ; ການເຮັດບຸນນະມັດສະການພະທາດຫລວງວຽງຈັນ ນັບວ່າເປັນປະເພນີທີ່ສຳຄັນຢ່າງຍິ່ງທີ່ສືບຕໍ່ກັນມາໄດ້ຫລາຍສະຕະວັດ ໂດຍມີພະມະຫາກະສັດອົງເປັນປະມຸກໃນສະໄໝຕ່າງໆ ມາເປັນປະທານພິທີປະຈຳທຸກໆປີບໍ່ຂາດ ສິ່ງທີ່ນຳມາສັກກາລະບູຊາໄຫວ້ພະທາດຫລວງ ມີດອກໄມ້ທູບທຽນ, ສິ່ງສຳຄັນ ແລະ ຂາດບໍ່ໄດ້ແມ່ນຜາສາດເຜີ້ງ ຄືມື້ຂຶ້ນ 13 ຄ່ຳເດືອນ 12 ເພິ່ນຈະເລີ່ມແຫ່ຜະສາດຢູ່ວັດສີເມືອງ (ຫລັກເມືອງ) ປະມານ 7 ໂມງແລງ, ມື້ຂຶ້ນ 14 ຄ່ຳ ມີພິທີຮັບນ້ຳໃຫຍ່ຢູ່ວັດອົງຕື້ ແລະ ມື້ຄ່ຳເພັງ ເດືອນ 12 ເປັນມື້ດຳເນີນພິທີສຸດທ້າຍຢູ່ພະທາດຫລວງ ໂດຍການຕັກບາດຖວາຍທານຢ່າງຄຶກຄື້ນ.

ໃນສະໄໝບູຮານ ແລະ ສະໄໝຕ່າງໆ ຈົນສືບມາເຖິງສູ່ມື້ນີ້ ກ່ອນຈະເຖິງມື້ໄຫວ້ທາດຫລວງ ໄດ້ມີການຄົບງັນມາກ່ອນແລ້ວ ຢ່າງໜ້ອຍ 5-7 ວັນ, ການຄົບງັນມີກິດຈະກຳກິລາ ແລະ ສິລະປະ-ວັນນະຄະດີຕາມປະເພນີ ມາຮອດສະໄໝນີ້ ພະທາດຫລວງວຽງຈັນໄດ້ກາຍເປັນສັນຍາລັກຂອງຊາດ (ກາຊາດ) ອີກດ້ວຍ.



ສຸກສະບາຍຫາຍໂຣຄາ

# ພຶດຕິກຳ ທີ່ເປັນໄພງຽບ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**

ພະນັກງານທີ່ເຮັດວຽກໃນຫ້ອງການ ຫລາຍທ່ານບໍ່ສາມາດປະຕິເສດໄດ້ວ່າ ຕ້ອງເຮັດວຽກໜັກເປັນປະຈຳຕະຫລອດປີ ເຊິ່ງບາງຄັ້ງພຶດຕິກຳທີ່ເຮັດໃນຫ້ອງການ ໄດ້ສົ່ງຜົນກະທົບບໍ່ດີຫລາຍຢ່າງຕໍ່ສຸຂະພາບ; ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້, ເຮົາໄດ້ລວມເອົາ 6 ພຶດຕິກຳ ທີ່ຖືວ່າເປັນໄພງຽບຂົ່ມຂູ່ສຸຂະພາບ ຂອງພະນັກງານຫ້ອງການ ອັນເປັນສາເຫດພາໃຫ້ເກີດພະຍາດຕ່າງໆ ມາໃຫ້ທ່ານໄດ້ຮູ້ຈັກ ແລະ ສຶກສານຳກັນ ດັ່ງນີ້:

**1. ນອນເດິກ**

ຕ້ອງເຮັດວຽກໜັກເປັນປົກກະຕິ ແລະ ຕ້ອງຕື່ນເຊົ້າ ເພື່ອໄປເຮັດວຽກໃຫ້ທັນເວລາ ແຕ່ການນອນເດິກກາຍເປັນພຶດຕິກຳທີ່ເຮັດເປັນປະຈຳ ເຊິ່ງຈະພາໃຫ້ພັກຜ່ອນບໍ່ພຽງພໍ ເຮັດໃຫ້ສະມະທິສັ້ນ ແລະ ຍັງເຮັດໃຫ້ລະບົບຕ່າງໆໃນຮ່າງກາຍ ເຮັດວຽກໄດ້ບໍ່ເຕັມທີ່.

**2. ກິນອາຫານບໍ່ຖືກເວລາ**

ການກິນອາຫານບໍ່ຖືກເວລາ, ກິນອາຫານຢ່າງຮີບດ່ວນ ແລະ ກິນບໍ່ພຽງພໍ ຫລື ອາດຈະກິນເກີນຄວາມຕ້ອງການຂອງຮ່າງກາຍ ເປັນອີກໜຶ່ງພຶດຕິກຳ ທີ່ພະນັກງານຫ້ອງການມັກຈະເຮັດ ຈຶ່ງພາໃຫ້ກະເພາະເຮັດວຽກໄດ້ບໍ່ປົກກະຕິ.

**3. ຕິດຈໍມືຖື**

ຢູ່ໜ້າຈໍຄອມພິວເຕີ ຫລື ຈໍມືຖືຫລາຍເກີນໄປ ມັນເປັນໄພຂົ່ມຂູ່ທີ່ງຽບ ທີ່ພາໃຫ້ເກີດການເຈັບຫົວ ຫລື ເຮັດໃຫ້ຕາວຸ້ນເສື່ອມສະພາບ ແລະ ຍັງສາມາດສົ່ງຜົນໃຫ້ນິ້ວມືລັອກນຳອີກ.

**4. ພາຍຖົງໜັກ.**

ພຶດຕິກຳນີ້ສາມາດເຮັດໃຫ້ເກີດການປວດບ່າ, ເຈັບຄໍ ແລະ ສາມາດລາມໄປສູ່ການເຈັບຫົວ ແລະ ເຈັບຫລັງ ເຊິ່ງເປັນສາເຫດຂອງການຍຸບ ແລະ ການເສື່ອມ ຂອງກະດູກສັນຫລັງ ຈົນເກີດເປັນຄວາມສ່ຽງທີ່ເຮັດໃຫ້ກະດູກທັບເສັ້ນປະສາດ ລວມທັງເຮັດໃຫ້ເກີດອາການແຂນຂາມຶນຊາ ແລະ ອ່ອນເພຍ.

**5. ນັ່ງຜິດທ່າ**

ອາດຈະເປັນຍ້ອນນິໄສ ຫລື ຍ້ອນຮູ້ສຶກສະດວກສະບາຍ ກັບທ່ານັ່ງທີ່ບໍ່ຖືກຕ້ອງ ແຕ່ຖ້ານັ່ງຜິດທ່າເປັນເວລາດົນໆ ຈະເຮັດໃຫ້ເກີດອາການປວດບ່າ ແລະ ຫລັງ ພ້ອມທັງເຮັດໃຫ້ເກີດຄວາມເມື່ອຍລ້າໃນການເຮັດວຽກ ໂດຍບໍ່ຮູ້ໂຕ ຖືເປັນພຶດຕິກຳທີ່ເຮັດໃຫ້ເກີດຄວາມທຸກທໍລະມານຫລາຍໃນຊີວິດ.

**6. ກິນຈຸບຈິບໝົດມື້**

ຫລາຍທ່ານ ເລືອກທີ່ຈະແກ້ຄວາມຢາກນອນ ໂດຍການກິນອາຫານຈຸບຈິບ ຫລື ບາງຄົນກໍກິນໜ້ອຍໜຶ່ງ ແລະ ກິນແບບນັ້ນຢູ່ໝົດມື້ ເຊິ່ງພຶດຕິກຳນີ້ ຖືວ່າເປັນການເພີ່ມນ້ຳໜັກໃຫ້ກັບຮ່າງກາຍໂດຍບໍ່ຮູ້ຕົວ ເນື່ອງຈາກເກີດການສະສົມຂອງໄຂມັນ.

ສຳລັບທ່ານໃດ ທີ່ຮູ້ຈັກວ່າຕົນມີພຶດຕິກຳຕ່າງໆເຫລົ່ານັ້ນ ໝາຍຄວາມວ່າ ທ່ານກຳລັງຖືກໄພຂົ່ມຂູ່ງຽບ ທີ່ອາດມີຜົນກະທົບທາງລົບຕໍ່ຮ່າງກາຍ. ສະນັ້ນ, ຈົ່ງຢ່າລືມຮັກຕົນເອງໃຫ້ຫລາຍ ໂດຍເລີ່ມຈາກການປັບປຸງພຶດຕິກຳທັງ 6 ຢ່າງນີ້ກ່ອນ, ຈາກນັ້ນຄ່ອຍໆຫັນມາກິນອາຫານທີ່ດີຕໍ່ສຸຂະພາບ ແລະ ໃຫ້ເວລາຕົນເອງເພື່ອອອກກຳລັງກາຍ ເຊື່ອແນ່ວ່າຈະຊ່ວຍໃຫ້ສຸຂະພາບດີຂຶ້ນຢ່າງແນ່ນອນ.

**www.sanook.com**



ສາລາກະວີ

# ສິດບາງຄົນ

**# ໂດຍ: ແກ້ວຕາ**

◆ ຄູນີ້ໃຈຕໍ່ຕັ້ງ ສຸມໃສ່ການສອນ
ກ່ອນນອນຍັງຄວາຫາ ຊອກຕຳລາຄົ້ນ
ຫົວນອນກໍຫົນໄດ້ ໃຈຫວັງຕັ້ງຕໍ່
ຂໍພຽງແຕ່ພວກນ້ອງ ມີຄວາມຮູ້ໃສ່ຕົນ

◆ ນັກຮຽນຢ່າມີແຕ່ມົ້ວ ຫົວຊື່ນວິນແຊວ
ຫາແຕ່ແນວມາໂສ ວຸ່ນວາຍໃນຫ້ອງ
ຄັນວ່າຄູຖາມທ້ອງ ຕິຕຽນເຕືອນກ່າວ
ໃຜກໍຈາຈົ່ມເວົ້າ ຄູນີ້ບໍ່ດີ

◆ ວັນກວດກາພວກນ້ອງ ຫາກ່າຍຕຳລາ
ທຳທ່າຄືຄູເປັນ ຫຸ່ນການມາເຝົ້າ
ເອົາຕຳລາມາຕັ້ງ ຫາແນວທາງກ່າຍ
ໝາຍເພື່ອພຽງຢາກໃຫ້ ຄະແນນໄດ້ດັ່ງຫວັງ

◆ ຄັນວ່າເສັງບໍ່ໄດ້ ຕາມທີ່ໂຕຄອຍ
ປ້ອຍດ່າໂວຍວາຍຈາ ວ່າຄູໃຈຫ້ຽມ
ຕຽມແຕ່ອັນເວົ້າເວົ້າ ເອົາແນວບໍ່ດີມາໃສ່
ໃຫ້ໃຈຄູດ່າງພ້ອຍ ຄົນປ້ອຍທົ່ວສັງຄົມ

◆ ຄັນວ່າເສັງຫາກໄດ້ ສົມດັ່ງໃຈໝາຍ
ມີວຽກເປັນນາຍຄົນ ເດັ່ນດີມີໜ້າ
ຜັດວາຈາຄຸຍໂມ້ ໂອຫັງດູຖູກ
ເບິ່ງຄູຄືລູກນ້ອງ ຈອງຫອງເຢີ້ຍໝິ່ນຄູ

# ກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

**ມາດຕາ 6 ຄວາມຮັບຜິດຊອບກ່ຽວກັບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ ມີຄວາມຮັບຜິດຊອບໃນການກວດກາ ຄຸນນະພາບ ແລະ ຜະລິດຕະພັນ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ຂອງຕົນ ຕາມມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການສຳຫຼວດວັດແທກແລະ ສ້າງແຜນທີ່ ຕ້ອງນຳໃຊ້ຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ຕາມມາດຕະຖານເຕັກນິກທີ່ປະກາດໃຊ້ໃນແຕ່ລະໄລຍະ ແລະ ສິ່ງຂໍ້ມູນ, ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ຈຳເປັນ ໃຫ້ກະຊວງພາຍໃນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃຫ້ການຮ່ວມມື, ອຳນວຍຄວາມສະດວກ, ສະໜອງຂໍ້ມູນ, ປົກປັກຮັກສາໂຄງລ່າງພື້ນຖານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່.

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຫາກບໍ່ປະຕິບັດຕາມມາດຕະຖານເຕັກນິກທີ່ກຳນົດແລ້ວ ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນຈາກວິຊາການ ຫຼື ເຕັກນິກຂອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ດ້ວຍການແລກປ່ຽນບົດ

ຮຽນ, ຂໍ້ມູນ ຂ່າວສານ, ການຍົກລະດັບຄວາມຮູ້, ຄວາມສາມາດຂອງບຸກຄະລາກອນ ບົນພື້ນຖານການເຄົາລົບ ແລະ ປະຕິບັດຕາມນະໂຍບາຍການຕ່າງປະເທດ ຂອງ ສປປ ລາວ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ວຽກງານສຳຫຼວດວັດແທກ

**ມາດຕາ 9 ວຽກງານສຳຫຼວດວັດແທກ**

ວຽກງານສຳຫຼວດວັດແທກ ມີ ດັ່ງນີ້:

- ການສຳຫຼວດວັດແທກພື້ນຖານແຫ່ງຊາດ;
- ການສຳຫຼວດວັດແທກວຽກສະເພາະ;
- ການຖ່າຍພາບ.

### ໝວດທີ 1
### ການສຳຫຼວດວັດແທກພື້ນຖານແຫ່ງຊາດ

**ມາດຕາ 10 ການສຳຫຼວດວັດແທກພື້ນຖານແຫ່ງຊາດ**

ການສຳຫຼວດວັດແທກພື້ນຖານແຫ່ງຊາດ ແມ່ນ ຂະບວນການສຳຫຼວດ, ກໍ່ສ້າງ ແລະ ວັດແທກຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ຕາມມາດຕະຖານເຕັກນິກ ເພື່ອນຳໃຊ້ເຂົ້າໃນວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່, ກິດຈະການກໍ່ສ້າງໂຄງລ່າງພື້ນຖານ ຢ່າງເປັນລະບົບ ແລະ ເອກະພາບໃນຂອບເຂດທົ່ວປະເທດ.

ຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ມີ ດັ່ງນີ້:

- ຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ;
- ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ;
- ຕາໜ່າງເຄົ້າລະດັບສູງແຫ່ງຊາດ;
- ຕາໜ່າງແຮງດຶງດູດຂອງໜ່ວຍໂລກ;
- ຕາໜ່າງສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ.

**ມາດຕາ 11 ຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ**

ຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ ແມ່ນ ຈຸດທີ່ຕັ້ງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກ ທີ່ແນ່ນອນ ຊຶ່ງໄດ້ກຳນົດເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ການວັດແທກຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ ແລະ ຕາໜ່າງເຄົ້າລະດັບສູງແຫ່ງຊາດ ໃຫ້ສະໝໍ່າສະເໝີ, ແໜ້ນໜາ, ຖາວອນ, ມີຄວາມຊັດເຈນສູງ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ.

ສຳລັບການກຳນົດຈຸດເຄົ້າພິກັດແຫ່ງຊາດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 12 ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ**

ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ ແມ່ນ ຈຸດທີ່ຕັ້ງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກທີ່ແນ່ນອນ ຊຶ່ງໄດ້ກຳນົດ ເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ວັດແທກຕາໜ່າງເຄົ້າພິກັດທາງຮາບ ແຕ່ລະຂັ້ນ ຊຶ່ງມີຫົວໜ່ວຍເປັນອົງສາ ຫຼື ແມັດ ທີ່ປົກຄຸມຢ່າງແໜ້ນໜາ ແລະ ສະໝໍ່າສະເໝີ ຕາມມາດຕະຖານເຕັກນິກແຕ່ລະຂັ້ນ.

ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ ປະກອບດ້ວຍ 4 ຂັ້ນ ຊຶ່ງລາຍລະອຽດຂອງແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 13 ຕາໜ່າງເຄົ້າລະດັບສູງແຫ່ງຊາດ**

ຕາໜ່າງເຄົ້າລະດັບສູງແຫ່ງຊາດ ແມ່ນ ຈຸດລະດັບສູງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກໂດຍທຽບໃສ່ລະດັບໜ້ານໍ້າທະເລສະເລ່ຍປານກາງ ຊຶ່ງມີຫົວໜ່ວຍເປັນແມັດ ທີ່ໄດ້ກຳນົດເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ວັດແທກຕາໜ່າງລະດັບສູງ ແຕ່ລະຂັ້ນທີ່ສະໝໍ່າສະເໝີ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກແຕ່ລະຂັ້ນ.

ຕາໜ່າງເຄົ້າລະດັບສູງແຫ່ງຊາດ ປະກອບດ້ວຍ 4 ຂັ້ນ ຊຶ່ງລາຍລະອຽດຂອງແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 ຕາໜ່າງແຮງດຶງດູດຂອງໜ່ວຍໂລກ**

ຕາໜ່າງແຮງດຶງດູດຂອງໜ່ວຍໂລກ ແມ່ນ ຈຸດໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກ ຊຶ່ງໄດ້ຄ່າວັດແທກຈາກແຮງດຶງດູດຂອງໜ່ວຍໂລກ ທີ່ໄດ້ກຳນົດເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ວັດແທກຕາໜ່າງແຮງດຶງດູດຂອງໜ່ວຍໂລກ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ.

**ມາດຕາ 15 ຕາໜ່າງສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ**

ຕາໜ່າງສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ແມ່ນ ຈຸດທີ່ຕັ້ງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກ ທີ່ແນ່ນອນ ຊຶ່ງໄດ້ກຳນົດເປັນຈຸດກໍ່ສ້າງສະຖານີ ແລະ ວັດແທກຮັບ-ສົ່ງສັນຍານດາວທຽມ ດ້ວຍລະບົບດາວທຽມນຳພາທາງໂລກ ທີ່ສາມາດວັດແທກ ແລະ ສະໜອງຂໍ້ມູນແບບຕໍ່ເນື່ອງ ໂດຍຜ່ານສູນຄວບຄຸມ ແລະ ບໍລິການຂໍ້ມູນ ດ້ວຍລະບົບອິນເຕີເນັດ ເພື່ອນຳໃຊ້ເຂົ້າໃນທຸກວຽກງານສຳຫຼວດວັດແທກ, ຕິດຕາມແຜ່ນດິນໄຫວ, ການເໜັງຕີງ, ການເຄື່ອນຍ້າຍຂອງແຜ່ນເປືອກໂລກ ແລະ ປາກົດການອື່ນທີ່ກ່ຽວຂ້ອງ.

### ໝວດທີ 2
### ການສຳຫຼວດວັດແທກວຽກສະເພາະ

**ມາດຕາ 16 ການສຳຫຼວດວັດແທກວຽກສະເພາະ**

ການສຳຫຼວດວັດແທກວຽກສະເພາະ ແມ່ນ ຂະບວນການສຳຫຼວດວັດແທກຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ ມີຈຸດປະສົງສຳຫຼວດວັດແທກເພື່ອຮັບໃຊ້ວຽກງານສະເພາະໃດໜຶ່ງຂອງຕົນ.

ການສຳຫຼວດວັດແທກວຽກສະເພາະ ມີ ດັ່ງນີ້:

- ການສຳຫຼວດວັດແທກກ່ຽວກັບເສັ້ນຊາຍແດນແຫ່ງຊາດ;
- ການສຳຫຼວດວັດແທກກ່ຽວກັບເສັ້ນເຂດແດນເຊື່ອມຕໍ່;
- ການສຳຫຼວດວັດແທກກ່ຽວກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
- ການສຳຫຼວດວັດແທກກ່ຽວກັບທີ່ດິນ;
- ການສຳຫຼວດວັດແທກກ່ຽວກັບກະສິກຳ ແລະ ປ່າໄມ້;
- ການສຳຫຼວດວັດແທກກ່ຽວກັບອຸທົກກະສາດ;
- ການສຳຫຼວດວັດແທກກ່ຽວກັບເຂື່ອນ ແລະ ແລວສາຍສົ່ງໄຟຟ້າ;
- ການສຳຫຼວດວັດແທກກ່ຽວກັບຕາໜ່າງຄົມມະນາຄົມ;
- ການສຳຫຼວດວັດແທກກ່ຽວກັບກິດຈະການໃຕ້ດິນ;
- ການສຳຫຼວດວັດແທກກ່ຽວກັບຄວາມສ່ຽງໄພພິບັດ;
- ການສຳຫຼວດວັດແທກກ່ຽວກັບທໍລະນີສາດ ແລະ ແຮ່ທາດ;
- ການສຳຫຼວດວັດແທກວຽກສະເພາະອື່ນທີ່ກ່ຽວຂ້ອງ.
- ສຳລັບ ລາຍລະອຽດຂອງການສຳຫຼວດວັກແທກວຽກສະເພາະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 17 ຕາໜ່າງການສຳຫຼວດວັດແທກວຽກສະເພາະ**

ຕາໜ່າງການສຳຫຼວດວັດແທກວຽກສະເພາະ ແມ່ນ ຂະບວນການສຳຫຼວດ, ກໍ່ສ້າງ ແລະ ວັດແທກຂັ້ນເຕັກນິກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນວຽກສະເພາະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້.

ການສ້າງຕາໜ່າງສຳຫຼວດວັດແທກວຽກສະເພາະ ຕ້ອງນຳໃຊ້ຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ແລະ ປະຕິບັດ ຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

### ໝວດທີ 3
### ການຖ່າຍພາບ

**ມາດຕາ 18 ການຖ່າຍພາບ**

ການຖ່າຍພາບ ແມ່ນ ການບັນທຶກຂໍ້ມູນເທິງພື້ນຜິວໂລກ ດ້ວຍການຖ່າຍພາບທາງອາກາດ, ຖ່າຍພາບພື້ນດິນ ແລະ ພື້ນນໍ້າ ເພື່ອສ້າງແຜນທີ່.

**ມາດຕາ 19 ການຖ່າຍພາບທາງອາກາດ**

ການຖ່າຍພາບທາງອາກາດ ແມ່ນ ການບັນທຶກຂໍ້ມູນເທິງພື້ນຜິວໂລກ ດ້ວຍການຖ່າຍພາບຈາກດາວທຽມ, ເຮືອບິນ ແລະ ເຮືອບິນບໍ່ມີຄົນຂັບ.

ການຖ່າຍພາບຈາກດາວທຽມ ມີໜ້າວຽກ ດັ່ງນີ້:

- ວາງແຜນວົງໂຄຈອນ ແລະ ກຳນົດພື້ນທີ່;
- ປະມວນ ແລະ ວິເຄາະ ຂໍ້ມູນ;
- ສຳເນົາຂໍ້ມູນ ແລະ ສ້າງແຜນທີ່ພູມສັນຖານ.

ອ່ານຕໍ່ສະບັບໜ້າ...



## ສົ່ງເສີມຜິດທ່າ

ໂດຍ: ດັ້ນກົບເມກ

ເມື່ອເວົ້າເຖິງຫລ່ຽມໂກງ ຫລື ຫລ່ຽມຫາເງິນຂອງຄົນທຸກມື້ນີ້ ໃຜໆກໍຄົງຈະຮູ້ວ່າ: ວິທີການຫາເງິນ ມີທັງສຸດຈະລິດ-ຖືກຕ້ອງຕາມກົດໝາຍ ແລະ ເຄິ່ງຖືກກົດໝາຍ-ສ່ຽງຕໍ່ການຖືກໂກງ ຫລອກລວງກັນເປັນຂັ້ນຕອນ ເຂົ້າທຳນອງຜູ້ຕັ້ງໃຈມາຫລອກແມ່ນໃສ່ໜ້າກາກຫລາຍໜ້າ ແລະ ເຊື່ອງຄົມມີດໄວ້ເຊືອດເມື່ອບັນລຸເປົ້າໝາຍແລ້ວ ເພາະສັງຄົມທຸກມື້ນີ້ ປະຊາຊົນບາງສ່ວນກໍຄຸ້ນຊິນກັບໜີ້ສິນຈົນຮູ້ສຶກວ່າບໍ່ຢ້ານໜີ້.

ເມື່ອຄົນທຳມະດາບໍ່ຢ້ານໜີ້ສິນເພາະອາໄສວ່າ: ພໍ່ແມ່ມີດິນ, ມີເຮືອນ ຄໍ້າປະກັນຈຶ່ງກ້າໄປຢືມໜີ້ (ເງິນ) ມາໃຊ້ຈ່າຍທັງເຮັດທຸລະກິດ ໃຊ້ຈ່າຍສ້າງຖານະສ້າງພາບຄວາມລວຍໃຫ້ມີໜ້າຕາທາງສັງຄົມ ເຊິ່ງບໍ່ຕ່າງຫຍັງກັບບັນຫາເຍົາວະຊົນຢາກໄດ້ໂທລະສັບລາຄາແພງ! ການສ້າງຂະບວນການເປັນທີມເຮັດທຸລະກິດດ້ານການເງິນຢາກໄດ້ເງິນມາໃຊ້ຈ່າຍ ທັງວິທີການໃຫ້ຢືມ ຫລື ໄປຢືມ ແລະ ຈົກຖົງຮ່ວມທຶນກັນ.

ຍົກຕົວຢ່າງ: ມີບາງຄົນຮຽນຈົບຕ່າງປະເທດ-ສະຫລາດ ແລະ ຮູ້ທັນວິທີການ-ກົນໂກງທາງການເງິນ ເມື່ອກັບມາຈັບມືກັບພະນັກງານບາງອາຊີບ ຫລື ບາງຄົນສ້າງເຄືອຂ່າຍເປັນທີມງານໜ້າເຊື່ອຖືແທ້ໆ ເພາະມີທັງການຈັດຕັ້ງກ່ຽວຂ້ອງຮັບປະກັນຖືກຕ້ອງ-ໃຊ້ຄູອາຈານເປັນຜູ້ໂຄສະນາ, ເຈົ້າໜ້າທີ່ບາງຄົນຊ່ວຍເວົ້າຈາປາໄສ ເມື່ອເຫຍື່ອຕິດເຫຍື່ອແລ້ວກໍປ່ອຍໃຫ້ເປັນໜ້າທີ່ຂອງຜູ້ຕົ້ນຄິດ (ວາງແຜນ) ແລະ ທີມງານໂດຍກົງສ້າງວິທີການດຶງເງິນມາໃຊ້ຈ່າຍມີທັງແລ່ນເອົາເງິນຈາກຕ່າງປະເທດມາເຮັດໂຄງການ, ມີທັງອ້າງຜູ້ໃຫຍ່ມີໜ້າມີຕາທາງສັງຄົມ ເພື່ອສ້າງຄວາມໜ້າເຊື່ອຖື ແລະ ສ້າງຂັ້ນຕອນໃຊ້ຈ່າຍເງິນໃຫ້ສັບຊ້ອນ ເມື່ອເຫັນວ່າໄດ້ເຫຍື່ອຫລາຍສົມຄວນແລ້ວ ກໍປິດສາກລະຄອນການສະແດງທັນທີ ແລ້ວໃຊ້ວິຊາລົດເດດຫາຍໂຕ ຫລື ແປງກາຍແບບຢູ່ໃນຄາບຄົນໃໝ່ທັນທີ...




**ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພິພັດເສລີ**

3. ເປົ້າໝາຍທີ່ຖືກຕິດຕາມກວດກາ ໝາຍເຖິງ ການຈັດຕັ້ງ ແລະ ບຸກຄະລາກອນ ທີ່ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງ, ເລືອກຕັ້ງ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ.

# ປະມວນຮູບພາບການເຂົ້າຮ່ວມກອງປະຊຸມປະຈໍາປີຂອງເວທີປຶກສາຫາລື ລັດຖະສະພາອາຊີ-ປາຊີຟິກ ຄັ້ງທີ 30 ແລະ ຢ້ຽມຢາມຣາຊະອານາຈັກໄທ ຢ່າງເປັນທາງການ
































**ຜູ້ຊີ້ນໍາ**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄໍາວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ
ທ່ານ ເປຄໍາ ລໍຄໍາສອນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອໍາພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ